ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປລາວ

ທີ່ ບຣຸກແຊນ

ເລກທີ່ ໖໔໑ /ສລບຊ.ສກ09

ວັນທີ 03 ມີນາ 2009

ກະຊວງອຸດສາຫະກຳແລະການຄ້າ
ເລກທີ: 0561......
ວັນທີ: 5/3/09...

ເຖິງ : - ກະຊວງ ການຕ່າງປະເທດ ( ຫ້ອງການ, ກົມ ອ.ອ , ກົມ ສ.ກ ) ,
- ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ,

ທີ່ ນະຄອນຫລວງວຽງຈັນ.

ເລື່ອງ : ກຳມາທິການເອີຣົບ ຫ້າມນຳເຂົ້າ ສິນຄ້າອຸປະໂພກ, ບໍລິໂພກ ທີ່ ປະສົມດ້ວຍສານກັນບູດ dimethyl fulmarate ( DMF ) .

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ. ລາວ ທີ່ ບຣຸກແຊນ ຂໍຖືເປັນກຽດ ລາຍງານມາຍັງ ກະຊວງຊາບວ່າ ; ສະຫະພາບເອີຣົບ ໄດ້ແຈ້ງໃຫ້ຊາບ ກ່ຽວກັບການຫ້າມນຳເຂົ້າ ສິນຄ້າ ອຸປະໂພກ, ບໍລິໂພກ ( Consumer product ) ທີ່ມີສານກັນບູດ ເຈືອປົນ ເພາະໄດ້ສົ່ງຜົນສະທ້ອນ ຕໍ່ຄວາມປອດໄພ ທາງສຸຂະພາບ ທີ່ນຳເຂົ້າຈາກຕ່າງປະເທດ. ກົມສັງລວມ ດ້ານສຸຂະພາບ ແລະ ຜູ້ ບໍລິໂພກ ຂອງ ສະຫະພາບ ເອີຣົບ ໄດ້ແຈ້ງໃຫ້ຊາບວ່າ ; ມີບາງປະເທດ ສະມາຊິກ ໄດ້ຮັບຜົນກະທົບທາງດ້ານສຸຂະພາບ ຈາກການບໍລິໂພກອາຫານ ແລະ ນຳໃຊ້ຜະລິດຕະພັນ ປະເພດໜັງ ແລະ ແຜ່ນແພ ທີ່ນຳເຂົ້າຈາກຕ່າງປະເທດ ໂດຍສະເພາະເກີດຈາກຄວາມຊຸ່ມຊື່ນ ຂອງຜະລິດຕະພັນໜັງ ແລະ ແຜ່ນແພ ທີ່ນຳໃຊ້ ສານກັນບູດ ( dimethyl fulmarate ) , ພາກສ່ວນກ່ຽວຂ້ອງໄດ້ຄົ້ນພົບ ໃນສິນຄ້າ ທີ່ນຳເຂົ້າ ຈາກ ສປ. ຈີນ ແລະ ມາເລເຊັຽ.

ເພື່ອເປັນການ ສະກັດກັ້ນບັນຫາດັ່ງກ່າວ ທີ່ອາດຈະເກີດຂຶ້ນ ໃນຕໍ່ໜ້າ ເພື່ອຮັບປະກັນຄວາມປອດໄພ ທາງສຸຂະພາບ ຂອງຜູ້ ບໍລິໂພກ ແລະ ນຳໃຊ້ ໃນທົ່ວເອີຣົບ, ໃນວັນທີ 29 ມັງກອນ 2009 ບັນດາປະເທດສະມາຊິກ ໄດ້ລົງຄະແນນສຽງ ເຫັນດີ ພາຍໃຕ້ ລະບຽບຄວາມປອດໄພຂອງຜະລິດຕະພັນລວມ ເລກທີ 2001/95/EC ໃຫ້ມີການຫ້າມນຳເຂົ້າ ຊົ່ວຄາວ ຜະລິດຕະພັນ ອຸປະໂພກ - ບໍລິໂພກ ທີ່ປະສົມດ້ວຍສານກັນບູດ ( Dimethyl fumarate ) .